# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 12 ກັນຍາ 2021 (09-12-2021)

---

## ແນ່ໃຈໃນຄວາມສັມພັນ

*ທ່ານຮູ້ຈັກໃຜຜູ້ນຶ່ງບໍ່ທີ່ໄວ້ວາງໃຈໄດ້ເກືອບຕລອດເວລາ?*

**ຈຸດສຳຄັນໃນບົດຮຽນ:** ສາຍສັມພັນຂອງຂ້າພະເຈົ້າກັບພຣະເຈົ້າສະທ້ອນໃຫ້ເຫັນວ່າຂ້າພະເຈົ້າດຳເນີນຊີວິດຢ່າງໃດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຊີວິດມັກຫຼອນເຮົາແລະໂຍນເຮົາລົງທະເລແຫ່ງຄວາມມືດມິດ. ພວກເຮົາພົບເຫັນເຫດການນີ້ໃນຕົ້ນປີ 2020 ເວລາໂຣກລະບາດຈາກຟາກໂລກເບື້ອງນັ້ນລາມມາກະໜ່ຳພວກເຮົາ.

- ວັນນຶ່ງພໍ່ແມ່ໄປສົ່ງລູກທີ່ໂຮງຮຽນ. ວັນຕໍ່ມາ ໂຮງຮຽນປິດຢ່າງບໍ່ມີກຳນົດ.
- ວັນນຶ່ງຄົນມີງານປົກຕິ, ໝັ້ນຄົງ. ວັນຕໍ່ມາ ມີຫຼາຍໂຮງງານປິດລົງ. ມີຫຼາຍຄົນບໍ່ໄດ້ເຮັດວຽກໝາຍຄວາມວ່າບໍ່ມີລາຍຮັບ. ຮ້າຍແຮງໄປກວ່ານັ້ນ ມີຫຼາຍຄົນຕົກງານ.
- ວັນນຶ່ງ ຄົນມີອິສຣະພາບໄປມາໄດ້, ແຕ່ໃນທັນໃດພວກເຂົາກໍໄດ້ຮັບຄຳສັ່ງໃຫ້ກັກຕົວຢູ່ໃນເຮືອນເພາະຢ້ານຕິດເຊື້ອ ຫຼື ນຳພະຍາດ Covid-19 ໄປຕິດຜູ້ອື່ນ. ໃນເມື່ອຊີວິດເຕັມໄປດ້ວຍສິ່ງທີ່ເຮົາບໍ່ຮູ້ຈັກ, ບໍ່ໝັ້ນໃຈ ແລະ ການຮັບປະກັນກໍຈະສູນຫາຍໄປ. ຄວາມຢ້ານ ແລະຄວາມສົງສັຍກໍຈະເຂົ້າມາແທນທີ່.

ພວກເຮົາທຸກຄົນຕ້ອງການຄວາມໝັ້ນໃຈ ແລະການຮັບປະກັນ, ແລະເວລາດຳເນີນຊີວິດຄຣິສຕຽນແລ້ວຄວາມໝັ້ນໃຈແລະການຮັບປະກັນກໍກາຍເປັນສິ່ງຈຳເປັນທີ່ສຸດ. ທ່ານເດວິດ ເອເລັນ (David Allen) ກ່າວວ່າ "ການດຳເນີນຊີວິດຄຣິສຕຽນທີ່ປາສຈາກສອງຢ່າງນີ້ກໍຄືກັນກັບຂັບຣົດທີ່ຢຽບຄັນເບຣກໄວ້." ບົດນີ້ສະແດງໃຫ້ເຮົາເຫັນວ່າພວກເຮົາສາມາດຍ້າຍຕີນເຮົາອອກຈາກຄັນເບຣກໄດ້!

**ພຣະຄັມພີກ່າວວ່າແນວໃດ :** ( ເບິ່ງຕາມຂໍ້ 1, 2, ແລະ 3, )

## ການສຶກສາພຣະຄັມພີ

**1. 1 ໂຢຮັນ 2:3-6.**

*3 ໃນຂໍ້ນີ້ແຫລະ, ເຮົາທັງຫລາຍຄົງສັງເກດໄດ້ວ່າພວກເຮົາຮູ້ຈັກກັບພຣະອົງ ຄືວ່າ ຖ້າພວກເຮົາຖືຮັກສາບັນດາຂໍ້ບັນຍັດຂອງ
ພຣະອົງ. 4 ຄົນໃດທີ່ເວົ້າວ່າ, "ຂ້າພະເຈົ້າຮູ້ຈັກກັບພຣະອົງ" ແຕ່ບໍ່ຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງ ຜູ້ ນັ້ນເປັນຄົນເວົ້າ
ຕົວະ ແລະ ຄວາມຈິງບໍ່ໄດ້ຢູ່ໃນຄົນນັ້ນແລ້ວ. 5 ແຕ່ຜູ້ໃດທີ່ຖືຮັກສາພຣະທັມຂອງພຣະອົງ ຜູ້ນັ້ນແຫລະ, ເປັນຜູ້ຮັກພຣະເຈົ້າ
ຢ່າງຄົບຖ້ວນ ດ້ວຍອາການຢ່າງນີ້ແຫລະ, ເຮົາທັງຫຼາຍຈຶ່ງຮູ້ວ່າພວກເຮົາຢູ່ໃນພຣະອົງ. 6 ຜູ້ໃດເວົ້າວ່າຕົນຢູ່ໃນພຣະອົງຜູ້ນັ້ນ
ກໍຄວນດຳເນີນຊີວິດຕາມທາງທີ່ພຣະຄຣິດຊົງດຳເນີນນັ້ນເໝືອນກັນ.*

ໃນຄຳສັ່ງສັ້ນໆຂອງວັກເຫຼົ່ານີ້ ທ່ານໂຢຮັນໄດ້ຂຽນຄຳວ່າ *ຮູ້* ສີ່ເທື່ອ. ທ່ານໂຢຮັນໄດ້ຂຽນວ່າ ຄຣິສຕຽນສາມາດຮູ້ຢ່າງແນ່ນອນວ່າເຂົາມີຄວາມສັມພັນກັບພຣະເຈົ້າ. ການຮັບປະກັນຄວາມພົ້ນຂຶ້ນຢູ່ກັບເງື່ອນໄຂທີ່ຖືກຕ້ອງ.

ເງື່ອນໄຂຖືກຕ້ອງສຳລັບຄຣິສຕຽນທີ່ຈະໄດ້ຮັບການຮັບປະກັນການມີຄວາມສັມພັນກັບພຣະເຈົ້າຂອງລາວມີພື້ນທີ່ການເດີນໄປກັບການເຊື່ອຟັງຄຳສັ່ງຂອງພຣະເຈົ້າ. ພວກເຮົາບໍ່ໄດ້ປະຕິບັດຕາມກົດໝາຍ, ແຕ່ປະຕິບັດຕາມຄວາມກະຕັນຍູຕໍ່ພຣະຄຸນ

ທຸກສິ່ງທີ່ພຣະເຈົ້າໄດ້ປະທານໃຫ້ແກ່ພວກເຮົາ,ໂດຍສະເພາະຂອງຂວັນ ອັນລ້ຳຄ່າຄືພຣະບຸດຂອງພຣະອົງ.

ການເຊື່ອຟັງຈະເກີດມີກໍຕໍ່ເມື່ອເຮົາຮັກສາພຣະຄຳຂອງພຣະອົງ. ຖ້ອຍຄຳນີ້ເນັ້ນໃຫ້ເຫັນຄວາມສຳຄັນຂອງການປະຕິບັດຢ່າງຕໍ່ເນື່ອງໃນການຮັກສາພຣະທັມຂອງພຣະອົງ. ພວກເຮົາຍັງຈະຜິດພາດຢູ່ໃນບາງໂອກາດ,ແຕ່ຄຣິສຕຽນແທ້ຈິງທຸກຄົນຊອບສແວງຫາດຳເນີນຊີວິດໃນການເຊື່ອຟັງ. ການເຊື່ອຟັງແມ່ນຜົນອັນແທ້ຈິງຂອງການບັງເກີດໃໝ່.ພຣະເຢຊູກ່າວວ່າ *"ຖ້າທ່ານທັງຫລາຍຮັກເຮົາ ທ່ານກໍຈະຖືຮັກສາຂໍ້ບັນຍັດຂອງເຮົາ" (ໂຢຮັນ 14:15).* ພວກເຮົາສະແດງຄວາມຮັກຂອງເຮົາຕໍ່ພຣະເຢຊູໂດຍການເຊື່ອຟັງ. ເພາະສະນັ້ນຖ້າພວກເຮົາຂາດການຮັບປະກັນຄວາມພົ້ນ, ພວກເຮົາຄວນກວດເບິ່ງຂັ້ນຕອນຂອງການເຊື່ອຟັງໃນຊີວິດເຮົາ. ການປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ບໍ່ໄດ້ຊ່ອຍໃຫ້ເຮົາພົ້ນ; ພວກເຮົາໄດ້ຮັບຄວາມພົ້ນໂດຍພຣະຄຸນທາງຄວາມເຊື່ອໃນພຣະເຢຊູ. ດຽວນີ້ເຮົາປະຕິບັດຕາມເພາະເຮົາມີຄວາມສັມພັນນັ້ນ.

*ທ່ານພົບຄວາມຫຍຸ້ງຍາກຫຍັງກ່ຽວກັບການເດີນຕາມຮອຍພຣະບາດຂອງພຣະເຢຊູ?*

ເຖິງຢ່າງໃດກໍຕາມ, ສຳລັບຜູ້ທີ່ບໍ່ປະຕິບັດຕາມ, ທ່ານໂຢຮັນມີຄຳເວົ້າທີ່ຮຸນແຮງວ່າ: *"ຄົນໃດທີ່ເວົ້າວ່າ, "ຂ້າພະເຈົ້າຮູ້ຈັກກັບພຣະອົງ" ແຕ່ບໍ່ຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງຜູ້ນັ້ນເປັນຄົນເວົ້າຕົວະ ແລະ ຄວາມຈິງບໍ່ໄດ້ຢູ່ໃນຄົນນັ້ນແລ້ວ" (ຂໍ້ 4).* ປຽບເໝືອນຄົນທີ່ອ້າງວ່າຕົນເປັນນັກກິລາຟຸດບອລແຕ່ບໍ່ໄດ້ເຂົ້າຝຶກຊ້ອມ ຫຼືບໍ່ເຂົ້າແຂ່ງຂັນຈັກເທື່ອ. ສິ່ງທີ່ລາວເວົ້າບໍ່ສົມປະກອບກັບຄວາມເປັນຈິງ. ໜ້າເສັຽດາຍ ນີ້ກໍເໝືອນກັນກັບຄຣິສຕຽນຫຼາຍໆຄົນໃນທຸກວັນນີ້. ເຂົາຮັບເອົາພຣະຄຣິດໂດຍບໍ່ໄດ້ປ່ຽນແປງຊີວິດແຕ່ຢ່າງໃດ.

ຄວາມຮັກຕໍ່ພຣະເຈົ້າຈິງ ສະທ້ອນໂດຍບຸນຄຸນການເຊື່ອຟັງຕໍ່ຄຳສັ່ງຂອງພຣະອົງ. ຖ້າທ່ານປາຖນາຢາກເຊື່ອຟັງພຣະທັມຂອງພຣະເຈົ້າໂດຍຄວາມຮູ້ບຸນຄຸນສຳລັບທຸກສິ່ງທີ່ພຣະຄຣິດໄດ້ຊົງກະທຳເພື່ອທ່ານ, ແລະ ຖ້າວ່າທ່ານເຫັນຄວາມປາຖນານັ້ນກຳລັງເກີດຜົນໃນທຸກຂັ້ນຕອນຂອງການເຊື່ອຟັງ, ແລ້ວ ທ່ານຄົງບໍ່ມີເຫດຜົນທີ່ຈະສົງສັຍຄວາມພົ້ນຂອງທ່ານ. ຄວາມສັມພັນຂອງທ່ານກັບພຣະເຈົ້າສະທ້ອນໃຫ້ເຫັນຢູ່ບ່ອນວ່າທ່ານດຳເນີນຊີວິດຢ່າງໃດ.

**2. <u>1 ໂຢຮັນ 2:7-11</u>.**

*[7]ພວກທີ່ຮັກເອີຍ, ເຮົາບໍ່ໄດ້ຂຽນຂໍ້ບັນຍັດໃໝ່ມາເຖິງເຈົ້າທັງຫລາຍ ແຕ່ເປັນຂໍ້ບັນຍັດເກົ່າຊຶ່ງເຈົ້າທັງຫລາຍມີຢູ່ຕັ້ງແຕ່ເດີມແລ້ວ*
*ຂໍ້ບັນຍັດເຫລົ່ານັ້ນ ຄືພຣະທັມທີ່ພວກເຈົ້າໄດ້ຍິນມາແລ້ວ. [8]ເຖິງຢ່າງນັ້ນກໍກ່າວໄດ້ວ່າ ເຮົາຂຽນຂໍ້ບັນຍັດໃໝ່ມາເຖິງເຈົ້າທັງ*
*ຫລາຍ ທີ່ວ່າໃໝ່ທັງຝ່າຍພຣະອົງ ແລະຝ່າຍເຈົ້າທັງຫລາຍນັ້ນ ກໍເພາະຄວາມມືດນັ້ນກຳລັງຜ່ານພົ້ນໄປ ແລະຄວາມສວ່າງ-*
*ແທ້ກໍໄດ້ສ່ອງຢູ່ແລ້ວ. [9]ຜູ້ໃດທີ່ເວົ້າວ່າຕົນຢູ່ໃນຄວາມສວ່າງ ແຕ່ຍັງກຽດຊັງພີ່ນ້ອງຂອງຕົນ ຜູ້ນັ້ນກໍຍັງຢູ່ໃນຄວາມມືດຈົນ*
*ເຖິງດຽວນີ້. [10]ຜູ້ທີ່ຮັກພີ່ນ້ອງຂອງຕົນກໍຕັ້ງຢູ່ໃນຄວາມສວ່າງ ແລະເຫດທີ່ຈະໃຫ້ສະດຸດໃຈກໍບໍ່ມີໃນຄົນນັ້ນ. [11]ແຕ່ຜູ້ທີ່ກຽດຊັງ*
*ພີ່ນ້ອງຂອງຕົນກໍຢູ່ໃນຄວາມມືດ ແລະ ທຽວໄປໃນຄວາມມືດແລ້ວບໍ່ຮູ້ວ່າຕົນກຳລັງໄປໃສ ເພາະຄວາມມືດໄດ້ເຮັດໃຫ້ຕາຂອງ*
*ຕົນບອດເສັຽແລ້ວ.*

ຄວາມຮັກສະແດງອອກໃນ 1 ໂຢຮັນຊ້ຳແລ້ວຊ້ຳເຫຼົ່າ. ມັນປະກົດອອກມາ 24 ເທື່ອ ໃນ 105 ຂໍ້ໄດ້ເພີ້ມສີສັນໃຫ້ແກ່ຈົດໝາຍສບັບນີ້. ໃນບົດນີ້ທ່ານໂຢຮັນໄດ້ຂຽນເຣື່ອງບັນຍັດຮັກທັງເກົ່າແລະໃໝ່. "ຄວາມຮັກເປັນບັນຍັດເກົ່າ" ໃນນັ້ນໄດ້ກ່າວໄວ້ໃນພຣະບັນຍັດເດີມ (ລະບຽບພວກເລວີ 19:17-18; ພຣະບັນຍັດສອງ 6:5). ຄວາມຈິງພຣະເຢຊູເວົ້າຕລອດພຣະບັນຍັດຫຼັ້ງເປັນບັນຍັດຂໍ້ໃຫຍ່. [37]*ພຣະເຢຊູຕອບວ່າ, 'ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈດ້ວຍສຸດຈິດ, ແລະ ດ້ວຍສຸດຄວາມຄຶດຂອງເຈົ້າ.'* [38]*ນັ້ນແຫລະ, ເປັນພຣະບັນຍັດຂໍ້ໃຫຍ່ແລະຂໍ້ຕົ້ນ.* [39]*ຂໍ້ທີສອງກໍເໝືອນກັນຄື 'ຈົ່ງຮັກເພື່ອນບ້ານເໝືອນ*

*ຮັກຕົນເອງ.' [40]ພຣະບັນຍັດແລະຖ້ອຍຄຳຂອງຜູ້ປະກາດພຣະທັມທັງໝົດກໍຂຶ້ນຢູ່ກັບພຣະບັນຍັດສອງຂໍ້ນີ້" (ມັດທາຍ 22:37-40).*

ດັ່ງນັ້ນ ໃນຄວາມໝາຍໃດທີ່ພຣະບັນຍັດເດີມກໍເປັນພຣະບັນຍັດໃໝ່ເໝືອນກັນ? ເຮົາເຫັນຄວາມໃໝ່ຂອງພຣະບັນຍັດເກົ່ານີ້ວ່າ ພຣະເຢຊູປະຕິບັດຢ່າງຄົບຖ້ວນແລະສະແດງອອກໃຫ້ເຫັນ. ເຖິງບັດນີ້, ບໍ່ມີຜູ້ໃດສະແດງຄວາມຮັກຄົບຖ້ວນໃນໂລກນີ້. ພຣະເຢຊູສຳແດງໃຫ້ເຮົາເຫັນວ່າ ການເຊື່ອຟັງຄືຫຍັງ. ພຣະເຢຊູບອກສາວົກຂອງພຣະອົງວ່າ, *"ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫລາຍຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດພວກເຈົ້າຈົ່ງຮັກກັນແລະກັນດ້ວຍຢ່າງນັ້ນ" (ໂຢຮັນ13:34).* ບໍ່ດົນ ກ່ອນພຣະອົງຊົງກ່າວຂໍ້ຄວາມເຫຼົ່ານີ້, ພຣະເຢຊູໄດ້ໃຫ້ແມ້ກະທັ້ງຕົວຢ່າງດ້ວຍການລ້າງຕີນພວກເຂົາ. ຄວາມຮັກຖ່ອມຕົວຮັບໃຊ້ຄົນອື່ນບໍ່ສຳຄັນວ່າໜ້າທີ່ນັ້ນຈະຕໍ່າຕ້ອຍພຽງໃດ.

ໃນເມື່ອລູກຂອງພຣະເຈົ້າເລືອກທີ່ຈະຮັກ, ພວກເຂົາເດີນໃນຄວາມສວ່າງ, ແລະຄວາມມືດກໍຫາຍໄປ. ຍ້ອນເຫດຜົນອັນນີ້ທ່ານໂຢຮັນຈຶ່ງຂຽນວ່າ, *"[8]ເຖິງຢ່າງນັ້ນກໍກ່າວໄດ້ວ່າ ເຮົາຂຽນຂໍ້ບັນຍັດໃໝ່ມາເຖິງເຈົ້າທັງຫລາຍ ທີ່ວ່າໃໝ່ທັງຝ່າຍພຣະອົງແລະຝ່າຍເຈົ້າທັງຫລາຍນັ້ນ ກໍເພາະຄວາມມືດນັ້ນກຳລັງຜ່ານພົ້ນໄປ ແລະຄວາມສວ່າງແທ້ກໍໄດ້ສ່ອງຢູ່ແລ້ວ. [9]ຜູ້ໃດທີ່ເວົ້າວ່າຕົນຢູ່ໃນຄວາມສວ່າງ ແຕ່ຍັງກຽດຊັງພີ່ນ້ອງຂອງຕົນ ຜູ້ນັ້ນກໍຍັງຢູ່ໃນຄວາມມືດຈົນເຖິງດຽວນີ້" (ຂໍ້ 8-9).*

ຄວາມສວ່າງທີ່ທ່ານໂຢຮັນກ່າວເຖິງນັ້ນ ແມ່ນອານາຈັກຂອງພຣະເຈົ້າ, ຊຶ່ງໄດ້ເລີ້ມແຕ່ການສະເດັດມາຄັ້ງແລກຂອງພຣະຄຣິດ: "ຄວາມສວ່າງອັນແທ້ຈິງໄດ້ສ່ອງມາປະກົດແລ້ວ." ພຣະເຢຊູເປັນ "ຄວາມສວ່າງຂອງໂລກ" (ໂຢຮັນ 8:12), ແລະອາອານາຈັກຂອງພຣະອົງມີລັກສນະທັງ ຄວາມສວ່າງແລະຄວາມຮັກ. ຄວາມຮັກຂອງເຮົາມີຕໍ່ພຣະເຈົ້າແລະ ຕໍ່ຄົນອື່ນຢືນຢັນວ່າ ເຮົາເປັນພົລເມືອງຂອງອານາຈັກນັ້ນ.

ຖານະທີ່ເປັນພົລເມືອງອານາຈັກຄວາມສວ່າງຂອງພຣະຄຣິດ, ພວກເຮົາຢູ້ຄວາມມືດຄືນຫຼັງເມື່ອເຮົາເດີນໄປໃນຄວາມຮັກ. ຖ້າເຮົາບໍ່ເດີນໄປໃນຄວາມສວ່າງ, ພວກເຮົາກໍຈະຕາບອດດ້ວຍຄວາມມືດ. ການຮັກຢ່າງພຣະຄຣິດຮັກບໍ່ແມ່ນເຣື່ອງງ່າຍ. ຄວາມຮັກມີການເສັຍສລະ. ຄວາມຮັກຂອງພຣະເຈົ້າມີຕໍ່ເຮົາພາໃຫ້ພຣະອົງເສັຽສລະພຣະບຸດຂອງພຣະອົງເປັນເຄື່ອງບູຊາ. ແຕ່ເມື່ອພວກເຮົາຮັກເສັຽສລະ, ແມ່ນພວກເຮົາສະທ້ອນຄວາມຮັກຂອງພຣະເຈົ້າ, ແລະພວກເຮົາໄດ້ສະທ້ອນຄວາມສັມພັນອັນຖືກຕ້ອງກັບພຣະເຈົ້າ. ແນ່ນອນ, ອາດຈະມີບາງເວລາທີ່ພວກເຮົາບໍ່ໄດ້ຮັກດັ່ງທີ່ຄວນ, ແຕ່ ຊີວິດຄຣິສຕຽນມີລັກສນະຄວາມສວ່າງບໍ່ແມ່ນຄວາມມືດ-ຄວາມຮັກບໍ່ແມ່ນຄວາມກຽດຊັງ.

*ທ່ານຈະພັນລະນາອາການບອດຝ່າຍຈິດວິນຍານຢ່າງໃດ?*

3. **<u>1 ໂຢຮັນ 2:15-17</u>.**

*[15]ຢ່າຮັກໂລກຫລືສິ່ງຂອງທີ່ຢູ່ໃນໂລກ ຖ້າຜູ້ໃດຮັກໂລກ ຄວາມຮັກຕໍ່ພຣະບິດາບໍ່ຢູ່ໃນຜູ້ນັ້ນ. [16]ເພາະສາລະພັດທີ່ມີຢູ່ໃນໂລກຄືຕັນຫາຂອງເນື້ອກາຍ, ຕັນຫາຂອງຕາ, ແລະຄວາມອວດອ້າງເປົ່າໆໃນຊີວິດນີ້ບໍ່ໄດ້ເກີດມາຈາກພຣະບິດາແຕ່ເກີດມາຈາກໂລກ. [17]ສ່ວນໂລກແລະຕັນຫາຂອງໂລກກຳລັງເສື່ອມສູນໄປ, ແຕ່ຜູ້ເຮັດຕາມພຣະທັຍຂອງພຣະເຈົ້າຈະຕັ້ງຢູ່ເປັນນິດ.*

ທ່ານໂຢຮັນໄດ້ສອນຄວາມສຳຄັນຂອງການຮັກອ້າຍນ້ອງຂອງເຮົາ, ແຕ່ມີຂອບເຂດຈຳກັດໃນສິ່ງທີ່ເຮົາຄວນຮັກ. "ຢ່າຮັກໂລກຫຼືສິ່ງຂອງໃນໂລກ"(ຂໍ້15). ເວລາທ່ານໂຢຮັນໃຊ້ຄຳວ່າ <u>*ໂລກ,*</u> ເພິ່ນບໍ່ໄດ້ໝາຍເຖິງຄົນທີ່ອາສັຍຢູ່ໃນແຜ່ນດິນໂລກນີ້. ນັ້ນອາດຈະເປັນການຂັດແຍ້ງກັນຢ່າງຊັດເຈນກັບສິ່ງທີ່ເພິ່ນໄດ້ຂຽນໃນພຣະທັມພຣະກິດຕິຄຸນຂອງເພິ່ນວ່າ: "ພຣະເຈົ້າຊົງຮັກໂລກ.."(ໂຢຮັນ 3:16). ແລະທ່ານໂຢຮັນບໍ່ໄດ້ໃຊ້ຄຳວ່າໂລກອ້າງເຖິງການເນຣະມິດສ້າງ. ມັນອາດເປັນການຂັດກັບການຮັກພຣະເຈົ້າຖ້າເຮົາຊັງສິ່ງທີ່ພຣະອົງສ້າງ. ແທນທີ່ຈະເປັນດັ່ງນັ້ນ, ທ່ານ ໂຢຮັນໄດ້ເວົ້າກ່ຽວກັບ<u>ຣະບົບການຈັດຕັ້ງອັນຊົ່ວຮ້າຍຂອງຄວາມມືດກວມໂລກນີ້</u>,

*ມີຫຍັງໃນໂລກທີ່ເຮົາຖືກຫຼອກລວງໃຫ້ຮັກ?*

ສັນດານໂລກທີ່ເຕັມດ້ວຍບາບທີ່ໄດ້ສະແດງອອກໃນການກະທຳ ແລະພຶດຕິເຫຼົ່ານັ້ນທີ່ຂັດກັບສິ່ງທີ່ພຣະເຈົ້າກະທຳ. ລະບົບຄວາມຮັກຄິດໂກງນີ້ ບໍ່ມີຫຍັງນອກຈາກຫຼອກລວງເຮົາໃຫ້ຫ່າງໄກຈາກພຣະເຈົ້າເທົ່ານັ້ນ.

ການທົດລອງຂອງໂລກອາດແບ່ງເປັນສາມປະເພດດັ່ງຕໍ່ໄປນີ້:

1. **ຕັນຫາເນື້ອກາຍ.** ນີ້ແມ່ນຄວາມປາຖນາຄວາມພໍໃຈທີ່ເຫັນແກ່ຕົວ; ຜູ້ທີ່ສົນໃຈຕົວເອງຫຼາຍກວ່າຄົນອື່ນ.
2. **ຕັນຫາຂອງຕາ.** ການທົດລອງປະເພດນີ້ພົວພັນກັບຄວາມໂລບມາກຢາກໄດ້, ມັກຈະຢາກໄດ້ເພີ້ມເລື້ອຍໆແຕ່ບໍ່ພໍໃຈຈັກເທື່ອ.

3. **ອວດຊັບສິ່ງຂອງ.** ການທົດລອງນີ້ໝາຍເຖິງການອິດສາ ແລະການຢາກດັງ, ການຍົກຍ້ອງແລະການສັຣເສີນ.ພວກເຮົາທຸກຄົນມີຄວາມສ່ຽງຕໍ່ບາບນີ້. ຊາຕານແລະໂລກເກັ່ງໃນການໂຄສະນາຄວາມບາບນີ້ໃຫ້ແກ່ເຮົາ! ໂລກຮຽກ ຮ້ອງຄວາມຕ້ອງການອັນໃຫຍ່ຫຼວງຂອງມະນຸດ, ແຕ່ມັນພະຍາຍາມໃຫ້ເຮົາຕອບສນອງຄວາມຕ້ອງການເຫຼົ່ານີ້ໃນທາງຜິດ. ຂ່າວດີມີຢູ່ວ່າ, *"ຜູ້ເຮັດຕາມພຣະທັຍຂອງພຣະເຈົ້າຈະຕັ້ງຢູ່ເປັນນິດ"(ຂໍ້17).* ມີແຕ່ພຣະເຈົ້າເທົ່ານັ້ນ ທີ່ສາມາດໃຫ້ຄວາມໝາຍແລະຄວາມຫວັງຜ່ານການທົດລອງຂອງຊີວິດ. ຄົນທີ່ສແວງຫາສິ່ງທີ່ພຣະເຈົ້າຊອບແມ່ນບຸກຄົນທີ່ສາມາດໄດ້ຮັບການຮັບຮອງວ່າຈະໄດ້ໄປສວັນໂດຍທາງຄວາມສັມພັນກັບພຣະເຈົ້າ.

*ກຸ່ມຂອງພວກເຮົາສາມາດຊ່ອຍກັນເອົາຊະນະທາງຂອງໂລກໃນຊີວິດຂອງເຮົາຢ່າງໃດ?*

## ນຳໃຊ້ໃນຊີວິດ

ຄວາມສັມພັນຂອງຂ້າພະເຈົ້າກັບພຣະເຈົ້າສະທ້ອນໃນການດຳເນີນຊີວິດຂອງຂ້າພະເຈົ້າ. ຈົ່ງເລືອກການນຳໃຊ້ອັນນຶ່ງຕໍ່ລົງໄປນີ້:

- **ຈົ່ງກວດເບິ່ງຊີວິດທ່ານ.** ຈົ່ງພິຈາຣະນາຜົນຂອງພຣະວິນຍານໃນຄາລາເຕັຽ 5:22-23. ຫຼັງຈາກກວດເບິ່ງຊີວິດທ່ານຖ້າຮູ້ສຶກວ່າ ທ່ານບໍ່ໄດ້ສະແດງລັກສນະຊີວິດຂອງຄຣິສຕຽນແທ້, ຈົ່ງສາຣະພາບ ແລະວາງໃຈໃນພຣະຄຣິດດຽວນີ້.
- **ຈົ່ງປັບຊີວິດຂອງທ່ານ.** ບາງທີຜ່ານການສຶກສານີ້, ທ່ານໄດ້ຮັບການຮັບປະກັນຄວາມສັມພັນກັບພຣະເຈົ້າ. ເຖິງຢ່າງໃດກໍຕາມ, ທ່ານສຳນຶກໄດ້ອີກວ່າມີສອງສາມສິ່ງໃນຊີວິດຂອງທ່ານທີ່ຕ້ອງການປັບໃສ່ນ້ຳພຣະທັຍພຣະເຈົ້າ. ຖ້າມີຈົ່ງເລີ້ມປ່ຽນແປງສິ່ງເຫຼົ່ານັ້ນໃນອາທິດນີ້. ມັນອາດເປັນສິ່ງງ່າຍຄືກັບຕື່ນແຕ່ເຊົ້າເພື່ອໃຊ້ເວລາເຝົ້າພຣະເຈົ້າ.
- **ຈົ່ງສ້າງຄວາມແຕກຕ່າງໃນຊີວິດຂອງຜູ້ອື່ນ.** ໃນອາທິດນີ້ ຈົ່ງຕັ້ງອົກຕັ້ງໃຈແບ່ງປັນຄວາມສັມພັນຂອງທ່ານກັບພຣະຄຣິດ. ຈົ່ງຊອກໂອກາດຮັບໃຊ້ຜູ້ໃດຜູ້ນຶ່ງ, ແລະເມື່ອໃດທ່ານພົບເຫັນ, ຢ່າໄດ້ລີລໍ. ການຮັບໃຊ້ຄົນອື່ນເປັນໂອກາດດີທີ່ຈະຊ່ອຍໃຫ້ເຮົາໄດ້ແບ່ງປັນຂ່າວປະເສີດ.

ປີທີ່ຜ່ານມານີ້ແນ່ນອນວ່າໄດ້ມີລູກຫຼົງຫຼາຍລູກຖືກໂຍນມາໃສ່ເຮົາ, ສິ່ງທີ່ອາດເຮັດໃຫ້ເຮົາສົງສັຍ. ແຕ່ຄວາມສັມພັນຂອງເຮົາກັບພຣະເຈົ້າໃຫ້ຄວາມໝັ້ນໃຈແລະການຮັບປະກັນຊັຍຊນະຕໍ່ທຸກສິ່ງທີ່ພະຍາຍາມທຳລາຍຄວາມເຊື່ອຂອງເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ http://lsbf.us ໂດຍ PSI**